ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 08 /ຄປຈ

ນະຄອນຫລວງວຽງຈັນ, ວັນທີ 24 / 02 / 12

ຫ້ອງວ່າການ ສຳນັກງານປະທານປະເທດ

ເລກທີ 866

ລົງວັນທີ 29/02/2012

# ມະຕິຕົກລົງ

## ຂອງຄະນະປະຈຳສະພາແຫ່ງຊາດ

### ວ່າດ້ວຍການຮັບຮອງເອົາ ລາຍການສິນຄ້າ ແລະອັດຕາພາສີຂາອອກ

-------------------------

- ອີງຕາມມາດຕາ 26 ຂໍ້ 7 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ;
- ອີງຕາມໜັງສືສະເໜີ ຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສັບເລກທີ 162/ນຍ, ລົງວັນທີ 31 ຕຸລາ 2011;
- ອີງຕາມການຕົກລົງ ຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 21 ກຸມພາ 2012.

**ຄະນະປະຈຳສະພາແຫ່ງຊາດຕົກລົງ**

**ມາດຕາ 1:** ຮັບຮອງເອົາ ລາຍການສິນຄ້າ ແລະອັດຕາພາສີຂາອອກ ເພື່ອເປັນບ່ອນອີງໃນການເກັບພາສີຂາອອກ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2:** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ຕ.ປະທານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄະນະປະຈຳສະພາແຫ່ງຊາດ

ດຣ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເລກທີ 002 ປປທ
ລົງວັນທີ 27/4/2012

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍລາຍການສິນຄ້າ ແລະ ອັດຕາພາສີຂາອອກ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ລົງວັນທີ 24 ກຸມພາ 2012.

**ປະທານປະເທດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:

ມາດຕາ 1. ຈຸດປະສົງ

ລັດຖະບັນຍັດສະບັບນີ້ ວາງອອກເພື່ອກຳນົດອັດຕາພາສີຂາອອກ ສຳລັບສິນຄ້າທີ່ຕ້ອງເສັຍພາສີຂາອອກ ແນໃສ່ເຮັດໃຫ້ການເກັບພາສີຂາອອກ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ມາດຕາ 2. ລາຍການສິນຄ້າ ແລະ ອັດຕາພາສີຂາອອກ

ລາຍການ ແລະ ອັດຕາພາສີ ສິນຄ້າທີ່ຕ້ອງເສັຍພາສີຂາອອກ ແມ່ນກຳນົດໄວ້ໃນຕາຕະລາງ ດັ່ງລຸ່ມນີ້:

| ລຳດັບ | ລະຫັດເຄົ້າ | ລະຫັດຍ່ອຍ | ເນື້ອໃນລະອຽດ | ອັດຕາພາສີ ຂາອອກ (%) |
|---|---|---|---|---|
| | 06.02 | | ຕົ້ນໄມ້ມີຊີວິດອື່ນ (ລວມທັງຮາກ), ງ່າຕອນ ແລະ ແໜງຕອນ, ເຊື້ອເຫັດ. | |
| 1 | | 0602.20.00 | - ຕົ້ນໄມ້ໃຫຍ່, ຕົ້ນໄມ້ນ້ອຍເປັນພຸ່ມ ແລະ ຕົ້ນໄມ້ເປັນກໍ, ມີໝາກທີ່ບໍລິໂພກໄດ້, ຈະຕິດຕາ ຫຼື ຕໍ່ກິ່ງ, ຊີກໍເຮັບອກຈາກຮາກ ທີ່ບົ່ງໄວ້ໃນລະຫັດເຄົ້າ 12.12 ຂອງສາລະບານອັດຕາພາສີ | 40 |
| 2 | | 0602.30.00 | - ຕົ້ນໂຣໂດເດນດຣອນ ແລະ ອະເຊເລຍ ຈະຕິດຕາ ຫຼື ຕໍ່ກິ່ງ ຫຼື ບໍ່ກໍຕາມ (ດອກເຈັຍ) | 40 |
| | | 0602.90 | - ອື່ນໆ: | |
| 3 | | 0602.90.10 | - - ຮາກຕົ້ນກວ້ຍໄມ້ເປັນງ່າຕອນ ແລະ ແໜງຕອນ | 10 |
| | 09.08 | | ໝາກຈັນເທດ, ດອກຈັນເທດ, ອານອມ ແລະ ໝາກແໜ່ງ. | |
| 4 | | 0908.10.00 | - ໝາກຈັນເທດ | 10 |
| 5 | | 0908.20.00 | - ດອກຈັນເທດ | 10 |
| 6 | | 0908.30.00 | - ໝາກກາດາມອມ (ໝາກແໜ່ງ) | 10 |
| | 13.01 | | ຂີ້ຄັ່ງກັ່ງ, ຢາງໄມ້ທຳມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົນໂອລີໂອເຣຊີ (ເຊັ່ນ: ຢາງຫອມທຳມະຊາດ). | |
| 7 | | 1301.20.00 | - ຂີ້ຄັ່ງ ຫຼື ຢາງໝຽວຈາກຕົ້ນໄມ້ທີ່ໃຊ້ເຮັດກາວ | 10 |

| | | | | |
|---|---|---|---|---|
| | | 1301.90 | - ອື່ນໆ: | |
| 8 | | 1301.90.10 | - - ຢານ | 10 |
| 9 | | 1301.90.20 | - - ຂີ້ຄັ່ງດາມາ | 10 |
| | 14.01 | | ວັດຖຸຈາກພືດຈຳພວກໃຊ້ ຕົ້ນຕໍໃນການຈັກສານ ຫຼື ເຄື່ອງເຮັດດ້ວຍມື (ໄມ້ໄຜ່, ຫວາຍ, ອໍ້, ຄ້າ, ຫວາຍເຄືອ, ຕົ້ນປານ, ຫຍ້າຈາກທັນຍາພືດທີ່ເຮັດໃຫ້ສະອາດ, ຟອກ ຫຼື ຍ້ອມສີ, ເປືອກຕົ້ນໄລມ໌). | |
| 10 | | 1401.10.00 | - ໄມ້ໄຜ່ | 10 |
| 11 | | 1401.20.00 | - ຫວາຍ | 40 |
| 12 | | 1401.90.00 | - ອື່ນໆ | 10 |
| | 25.05 | | ດິນຊາຍທຳມະຊາດທຸກຊະນິດຈະແຕ່ງສີ ຫຼື ບໍ່ກໍຕາມ, ນອກຈາກດິນຊາຍທີ່ມີໂລຫະປົນໃນ ໝວດທີ 26. | |
| 13 | | 2505.10.00 | - ດິນຊາຍຊີລີກາ ແລະ ດິນຊາຍຄວອດທ໌ | 5 |
| 14 | | 2505.90.00 | - ອື່ນໆ | 5 |
| | 25.13 | | ຫີນພຳມິສ, ເອເມີຣີ, ຄໍຣັນດຳທຳມະຊາດ, ກາຣ໌ເນດທ໌ທຳມະຊາດ ແລະ ວັດຖຸຂັດຖູທຳມະຊາດຊະນິດອື່ນໆ, ຈະຜ່ານກຳມະວິທີຄວາມຮ້ອນ ຫຼື ບໍ່ກໍຕາມ. | |
| 15 | | 2513.10.00 | - ຫີນພຳມິສ | 5 |
| 16 | | 2513.20.00 | - ເອເມີຣີ, ຄໍຣັນດຳທຳມະຊາດ, ກາຣ໌ເນດທ໌ທຳມະຊາດ ແລະ ວັດຖຸຂັດຖູທຳມະຊາດຊະນິດອື່ນໆ | 5 |
| 17 | 25.14 | 2514.00.00 | ຫີນກະດານອື່ນໆ, ຈະແຕ່ງຢ່າງຫຍາບໆ ຫຼື ພຽງ ແຕ່ເລື່ອຍ ຫຼື ຕັດໂດຍວິທີອື່ນໆໃຫ້ເປັນກ້ອນຮູບສີ່ຫຼ່ຽມ ຫຼື ເປັນທ່ອນຮູບສີ່ຫຼ່ຽມຍາວ (ລວມທັງສີ່ຫຼ່ຽມມົນທົນ) ຫຼື ບໍ່ກໍຕາມ. | 5 |

| | | | | |
|---|---|---|---|---|
| | 25.15 | | ຫີນອ່ອນ, ທຣາເວີຣ໌ທີນ, ອີຄອດຊີນ ແລະ ໃບລັກສະນະເປັນກ້ອນໃຫຍ່ໃຊ້ສຳລັບກໍ່ສ້າງ ມີຄວາມໜາແໜ້ນຈຳເພາະປະກົດແຕ່ 2.5 ຂຶ້ນໄປ, ແລະ ຫີນອາລາບາສເຕີຣ໌ຈະແຕ່ງແບບຫຍາບໆ ຫຼື ພຽງແຕ່ເລື່ອຍ ຫຼື ຕັດໂດຍວິທີອື່ນໃຫ້ເປັນຮູບກ້ອນສີ່ຫຼ່ຽມ ຫຼື ເປັນແຜ່ນຮູບສີ່ຫຼ່ຽມຍາວ (ລວມທັງສີ່ຫຼ່ຽມມົນທົນ) ຫຼື ບໍ່ກໍຕາມ. | |
| | | | - ຫີນອ່ອນ ແລະ ທຣາເວີຣ໌ທີນ: | |
| 18 | | 2515.11.00 | - - ຫີນດິບ ຫຼື ແຕ່ງຢ່າງຫຍາບໆ | 5 |
| | | 2515.12 | - - ພຽງແຕ່ເລື່ອຍ ຫຼື ຕັດດ້ວຍວິທີອື່ນໃຫ້ເປັນກ້ອນຫຼ່ຽມ ຫຼື ເປັນແຜ່ນຮູບສີ່ຫຼ່ຽມຍາວ (ລວມ ທັງສີ່ຫຼ່ຽມມົນທົນ) ຫຼື ບໍ່ກໍຕາມ: | |
| 19 | | 2515.12.10 | - - - ເປັນແທ່ງ | 5 |
| 20 | | 2515.12.20 | - - - ເປັນແຜ່ນ | 5 |
| 21 | | 2515.20.00 | - ອີຄອສຊີນ ແລະ ຫີນອື່ນໆທີ່ມີແຄລຊຽມຄາຣບໍເນດສຳລັບເຮັດອານຸສາວະລີ ຫຼື ໃຊ້ໃນການກໍ່ສ້າງ; ລວມເຖິງຫີນອະລາບາດສເຕີຣ໌ | 5 |
| | 25.16 | | ແກຣນິດ, ປອກພີຣີ, ບາຊອນທ໌, ຫີນຊາຍ ແລະ ຫີນອື່ນໆສຳລັບແກະສະຫຼັກ ຫຼື ໃຊ້ສຳລັບກໍ່ສ້າງ, ຈະແຕ່ງຫຍາບໆ ຫຼື ພຽງແຕ່ເລື່ອຍ ຫຼື ຕັດດ້ວຍວິທີອື່ນໃຫ້ເປັນຮູບກ້ອນສີ່ຫຼ່ຽມ ຫຼື ເປັນແຜ່ນຮູບສີ່ຫຼ່ຽມຍາວ (ລວມທັງສີ່ຫຼ່ຽມມົນທົນ) ຫຼື ບໍ່ກໍຕາມ. | |
| | | | - ຫີນແກຣນິດ: | |
| 22 | | 2516.11.00 | - - ຫີນດິບ ຫຼື ແຕ່ງຢ່າງຫຍາບໆ | 5 |
| | | 2516.12 | - - ພຽງແຕ່ເລື່ອຍ ຫຼື ຕັດໂດຍວິທີອື່ນໃຫ້ເປັນ ກ້ອນສີ່ຫຼ່ຽມ ຫຼື ເປັນແຜ່ນຮູບສີ່ຫຼ່ຽມຍາວ (ລວມ ເຖິງສີ່ຫຼ່ຽມມົນທົນ): | |

| | | | | |
|---|---|---|---|---|
| 23 | | 2516.12.10 | - - - ເປັນແທ່ງ | 5 |
| 24 | | 2516.12.20 | - - - ເປັນແຜ່ນ | 5 |
| 25 | | 2516.20.00 | - ຫີນຊາຍ | 5 |
| 26 | | 2516.90.00 | - ຫີນອື່ນໆສຳລັບໃຊ້ແກະສະຫຼັກ ຫຼື ໃຊ້ໃນການ ກໍ່ສ້າງ | 5 |
| | 25.17 | | ຫີນກ້ອນນ້ອຍ, ຫີນແຮ່ ຫຼື ຫີນຂົບແຕກ ຫຼື ໂມ້ແລ້ວ ຊະນິດທີ່ໂດຍປົກກະຕິໃຊ້ປະສົມຄອນກຣີດ, ໃຊ້ປູຖະໜົນ, ປູທາງລົດໄຟ ຫຼື ປູທາງອື່ນໆ; ຫີນ ຈາກຊາຍຝັ່ງ ແລະ ຫີນຟລິນທ໌, ຈະຜ່ານກຳມະວິທີທາງຄວາມຮ້ອນ ຫຼື ບໍ່ກໍຕາມ; ແມັກຄາແດມ ທີ່ໄດ້ຈາກແຮ່, ຈາກຂີ້ຕະເລດ ຫຼື ເສດທີ່ຄ້າຍກັນ ຈາກທີ່ຄ້າຍກັນຈາກອຸດສາຫະກຳ ຈະມີສ່ວນ ປະສົມຂອງຜະລິດຕະພັນໃນໝວດ ທີ່ກ່າວມາຂ້າງຕົ້ນ ຢູ່ນຳ ຫຼື ບໍ່ກໍຕາມ; ແມັກດາຄຳທີ່ປົນກັບນ້ຳມັນ ດິບ; ຫີນໃນລະ ຫັດເຄົ້າ 25.15 ແລະ 25.16 ທີ່ເປັນເມັດ, ເປັນເກັດ ແລະ ເປັນຜົງ, ຈະຜ່ານກຳ ມະວິທີໃຊ້ຄວາມຮ້ອນ ຫຼື ບໍ່ກໍຕາມ. | |
| 27 | | 2517.10.00 | - ແຮ່ຫີນທີ່ໂມ້ແລ້ວ ຊະນິດທີ່ໃຊ້ປະສົມຄອນກຣີດປູຖະໜົນ, ທາງລົດໄຟ ຫຼື ທາງອື່ນໆ; ແຮ່ຈາກ ແຄມຝັ່ງ ແລະ ຫີນຟຣິ້ນຈະຜ່ານກຳມະວິທີ ຄວາມຮ້ອນ ຫຼື ບໍ່ກໍຕາມ | 5 |
| 28 | | 2517.20.00 | - ຫີນນ້ອຍທີ່ໄດ້ຈາກຂີ້ຕະກອນ ຫຼື ເສດທີ່ຄ້າຍຄືກັນຈາກອຸດສາຫະກຳ, ຈະມີວັດຖຸຕາມລະຫັດ ຍ່ອຍ 2517.10 ລວມຢູ່ດ້ວຍ ຫຼື ບໍ່ກໍຕາມ | 5 |
| 29 | | 2517.30.00 | - ຫີນນ້ອຍປົນນ້ຳມັນດິບ | 5 |
| | | | - ຫີນຕາມລະຫັດຍ່ອຍ 25.15 ຫຼື 25.16 ທີ່ເປັນ ເມັດ, ເປັນສະເກັດ ແລະ ເປັນຜົງ, ຈະຜ່ານກຳ ມະວິທີໃຊ້ຄວາມຮ້ອນ ຫຼື ບໍ່ກໍຕາມ: | |
| 30 | | 2517.41.00 | - - ທີ່ໄດ້ຈາກຫີນອ່ອນ | 5 |
| 31 | | 2517.49.00 | - - ອື່ນໆ | 5 |
| | 44.02 | | ຖ່ານໄມ້ (ລວມທັງຖ່ານທີ່ໄດ້ຈາກເປືອກແຂງ ຫຼື ນັດ) ຈະຕິດກັນເປັນກ້ອນ ຫຼື ບໍ່ກໍຕາມ: | |

| | | | | |
|---|---|---|---|---|
| | | | | |
| 32 | | 4402.10.00 | - ທີ່ເຮັດດ້ວຍໄມ້ໄຜ່ | 15 |
| 33 | | 4402.90.00 | - ອື່ນໆ | 15 |
| | 72.04 | | ເສດ ແລະ ສິ່ງເສດເຫຼືອທີ່ໃຊ້ການບໍ່ໄດ້ຂອງຈໍາ ພວກເຫຼັກ ລວມທັງເສັ້ນໂລຫະ ທີ່ຫຼອມຈາກສິ່ງເສດເຫຼືອ ຊຶ່ງໃຊ້ການບໍ່ໄດ້ທີ່ເປັນເຫຼັກ ຫຼື ເຫຼັກກ້າ. | |
| 34 | | 7204.10.00 | - ເສດ ແລະ ສິ່ງເສດເຫຼືອ ທີ່ໃຊ້ການບໍ່ໄດ້ທີ່ ເປັນເຫຼັກຫຼໍ່ | 10 |
| | | | - ເສດ ແລະ ສິ່ງເສດເຫຼືອ ທີ່ໃຊ້ການບໍ່ໄດ້ຂອງ ເຫຼັກກ້າທີ່ປະສົມເປັນເນື້ອດຽວ: | |
| 35 | | 7204.21.00 | - - ທີ່ໄດ້ຈາກເຫຼັກກ້າບໍ່ເຂົ້າໝ້ຽງ | 10 |
| 36 | | 7204.29.00 | - - ອື່ນໆ | 10 |
| 37 | | 7204.30.00 | - ເສດ ແລະ ສິ່ງເສດເຫຼືອທີ່ໃຊ້ການບໍ່ໄດ້ທີ່ເປັນ ເຫຼັກ ຫຼື ເຫຼັກກ້າທີ່ຊຸບ ຫຼື ເຄືອບ. | 10 |
| | | | - ເສດ ແລະ ສິ່ງເສດເຫຼືອທີ່ໃຊ້ການບໍ່ໄດ້ອື່ນໆ: | |
| 38 | | 7204.41.00 | - - ເສດທີ່ໄດ້ຈາກການເສາະ, ເສດທີ່ໄດ້ຈາກ ການຂູດ, ຂີ້ເລື່ອຍ, ຂີ້ຕະໃບ, ເສດໄດ້ຈາກການເລັມຂອບ, ເສດທີ່ໄດ້ຈາກການຕອກພິມ, ຈະມັດ, ຫໍ່ ຫຼື ບໍ່ກໍຕາມ. | 10 |
| 39 | | 7204.49.00 | - - ອື່ນໆ | 10 |
| 40 | | 7204.50.00 | - ເສັ້ນໂລຫະທີ່ຫຼອມຈາກສິ່ງເສດເຫຼືອທີ່ໃຊ້ບໍ່ໄດ້ | 10 |

ມາດຕາ 3. ການຈັດຕັ້ງປະຕິບັດ

ການເກັບພາສີຂາອອກ ໃຫ້ປະຕິບັດຕາມລາຍການ ແລະ ອັດຕາພາສີຂາອອກສິນຄ້າ ທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງລັດຖະບັນຍັດສະບັບນີ້ຢ່າງເປັນເອກະພາບ.

ຫຼັກການໃນການເກັບພາສີຂາອອກໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ.

ມາດຕາ 4. ຜົນສັກສິດ

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ພາຍຫຼັງ ເກົ້າສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ຫຼື ບົດບັນຍັດໃດ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ